# ການຂົນສົ່ງຂ້າມຊາດຫຼາຍພັນກິໂລແມັດ ເຕັມໄປດ້ວຍຄວາມຮັກ



"ເມື່ອໄດ້ຂີ່ຂະບວນລົດໄຟຕາມທາງລົດໄຟລາວ-ຈີນແລ້ວ, ພວກເຮົາກໍຮູ້ສຶກໄວ້ວາງໃຈ. ຂໍສະແດງຄວາມຂອບໃຈຕໍ່ທາງລົດໄຟລາວ-ຈີນ ທີ່ໄດ້ສົ່ງແມ່ຂ້ອຍກັບບ້ານຢ່າງປອດໄພ!" ໃນວັນທີ 24 ທັນວາ 2023, ທ້າວຈ່ຽງມຽວ ຜູ້ໂດຍສານຈີນ ແລະ ແມ່ຂອງລາວ ທີ່ໄດ້ຮັບບາດເຈັບຈາກອຸບັດເຫດລົດ ໄດ້ຂີ່ລົດໄຟຈາກນະຄອນຫຼວງວຽງຈັນປະເທດລາວກັບຄືນປະເທດຈີນຢ່າງປອດໄພ. ຢູ່ເບື້ອງຫຼັງຜົນສຳເລັດນີ້ແມ່ນການປະຕິບັດງານຂ້າມຊາດຕາມໄລຍະທາງຫຼາຍພັນກິໂລແມັດ ທີ່ມີຫຼາຍຝ່າຍເຂົ້າຮ່ວມ ແລະ ໃຫ້ການສະໜັບສະໜູນ.

ທ່ານຈ່ຽງມຽວ ກ່າວວ່າ, ວັນທີ 26 ພະຈິກ 2023, ແມ່ຕົນໄດ້ຮັບບາດເຈັບຈາກອຸບັດເຫດທາງລົດໃນເວລາໄປທ່ອງທ່ຽວຢູ່ນະຄອນຊຽງໃໝ່ປະເທດໄທ, ອຸບັດເຫດດັ່ງກ່າວເຮັດໃຫ້ເສັ້ນເລືອດສະໝອງຂອງແມ່ແຕກ ແລະ ໄດ້ດຳເນີນການຜ່າຕັດກະໂຫຼກຫົວຢູ່ປະເທດໄທ. ເນື່ອງຈາກວ່າເງື່ອນໄຂການແພດຂອງທ້ອງຖິ່ນມີຄວາມຈຳກັດແລະມີອຸປະສັກທາງດ້ານພາສາ, ທ່ານຈ່ຽງມຽວຈຶ່ງຕັດສິນໃຈສົ່ງແມ່ຕົນກັບຄືນປະເທດຈີນເພື່ອເຂົ້າຮັບການປິ່ນປົວ. ຢ່າງໃດກໍຕາມ, ສະພາບຮ່າງກາຍຂອງແມ່ຈ່ຽງມຽວຂີ່ຍົນບໍ່ໄດ້, ເຮັດຈັ່ງໃດຈຶ່ງຈະສາມາດສົ່ງແມ່ກັບຄືນປະເທດຢ່າງປອດໄພຜ່ານທາງບົກໄດ້ກາຍມາເປັນບັນຫາໃຫຍ່. ສຸດທ້າຍທ່ານຈ່ຽງມຽວ ໄດ້ໄປຂໍຄວາມຊ່ວຍເຫຼືອຈາກສະຖານກົງສຸນໃຫຍ່ຈີນປະຈຳນະຄອນຊຽງໃໝ່ປະເທດໄທ.

ກົງສູນໃຫຍ່ຈີນປະຈຳນະຄອນຊຽງໃໝ່ໄດ້ລາຍງານສະພາບທີ່ກ່ຽວຂ້ອງໄປຍັງສະຖານທູດຈີນປະຈຳລາວທັນທີ. "ພາຍຫຼັງໄດ້ຮັບຮູ້ສະພາບການແລ້ວ, ພວກຂ້າພະເຈົ້າໄດ້ປຶກສາຫາລືກັບສະຖານກົງສຸນໃຫຍ່ຈີນປະຈຳນະຄອນຊຽງໃໝ່ແລະຄອບຄົວຂອງຜູ້ຖືກບາດເຈັບຢ່າງຕັ້ງໜ້າ, ພ້ອມທັງໄດ້ວາງແຜນການຍົກຍ້າຍ." ທ່ານນາງເສີງລົນ, ກົງສຸນສະຖານທູດຈີນປະຈຳລາວກ່າວ. ເມື່ອໄດ້ພິຈາລະນາສະພາບຮ່າງກາຍຂອງຄົນເຈັບແລະສະພາບເສັ້ນທາງຢ່າງຮອບດ້ານແລ້ວ,ສະຖານທູດຈີນປະຈຳລາວໄດ້ວາງແຜນການເຄື່ອນຍ້າຍທີ່ປອດໄພ ກໍຄືຂີ່ລົດຜ່ານຂົວມິດຕະພາບສາກົນເລກ 1 ທີ່ນະຄອນຫຼວງວຽງຈັນແລ້ວຂີ່ຂະບວນລົດໄຟລາວ-ຈີນກັບຄືນປະເທດຈີນ.

ພາຍຫຼັງໄດ້ກຳນົດແຜນການແລ້ວ, ສະຖານທູດຈີນປະຈຳລາວໄດ້ຕັ້ງໜ້າປະສານງານກັບສູນຊ່ວຍເຫຼືອຈີນນະຄອນຫຼວງວຽງຈັນ ທີ່ເປັນໜ່ວຍງານອາສາສະໝັກ, ບໍລິສັດທາງລົດໄຟລາວ-ຈີນຈຳກັດ, ໜ່ວຍແພດກອງທັບປົດປ່ອຍປະຊາຊົນຈີນ ທີ່ປະຈຳຢູ່ໂຮງໝໍ 103 ຂອງກອງທັບປະຊາຊົນລາວ ໄດ້ເຂົ້າຮ່ວມວຽກງານເພື່ອຮັບປະກັນການຂົນສົ່ງ, ການຂົນສົ່ງຂ້າມຊາດທີ່ມີໄລຍະທາງຫຼາຍພັນກິໂລແມັດຄັ້ງນີ້ກໍໄດ້ເລີ່ມປະຕິບັດງານຂຶ້ນ.

ວັນທີ 21 ທັນວາ 2023, ລົດຂອງສູນຊ່ວຍເຫຼືອຈີນນະຄອນຫຼວງວຽງຈັນໄດ້ອອກເດີນທາງໄປນະຄອນຊຽງໃໝ່ປະເທດໄທ, ໃນຕອນເຊົ້າມື້ຕໍ່ມາກໍໄດ້ຂົນສົ່ງຄົນເຈັບກັບຄືນສູ່ນະຄອນຫຼວງວຽງຈັນ, ພາຍໃຕ້ການເບິ່ງແຍງດູແລຂອງໜ່ວຍແພດຈີນ. ພາຍຫຼັງເດີນທາງເຂົ້າມາປະເທດລາວແລ້ວ, ຄົນເຈັບກໍຖືກສົ່ງໄປປິ່ນປົວຢູ່ໂຮງໝໍ 103 ຂອງກອງທັບປະຊາຊົນລາວໃນທັນທີ ເພື່ອປະເມີນສະພາບ ແລະ ບົ່ງມະຕິປິ່ນປົວຢ່າງລະອຽດ.

ວັນທີ 24 ທັນວາ 2023, ຄົນເຈັບໄດ້ຂີ່ລົດຂອງສູນຊ່ວຍເຫຼືອຈີນນະຄອນຫຼວງວຽງຈັນເດີນທາງໄປຮອດສະຖານີລົດໄຟວຽງຈັນ ແລະ ຂຶ້ນລົດໄຟໂດຍສານສາກົນຖ້ຽວ D888 ເດີນທາງໄປສູ່ນະຄອນຄຸນໝິງ ປະເທດຈີນ. ພາຍໃຕ້ຄວາມພະຍາຍາມຮ່ວມຂອງຫຼາຍຝ່າຍ, ສຸດທ້າຍຄົນເຈັບຖືກສົ່ງກັບຄືນປະເທດຈີນຢ່າງປອດໄພ ແລະ ໄດ້ຮັບການປິ່ນປົວຕໍ່ໄປ.

ໃນການຂົນສົ່ງຄົນເຈັບສາຫັດຂ້າມຊາດຄັ້ງນີ້, ທາງລົດໄຟລາວ-ຈີນ ໄດ້ເສີມຂະຫຍາຍບົດບາດດ້ານຄົມມະນາຄົມທີ່ປ່ຽນແທນບໍ່ໄດ້. ບໍລິສັດທາງລົດໄຟລາວ-ຈີນ ຈຳກັດໃຫ້ຮູ້ວ່າ: ບໍລິສັດທາງລົດໄຟລາວ-ຈີນຈຳກັດໄດ້ພະຍາຍາມຈົນສຸດຄວາມສາມາດເພື່ອຮັບປະກັນການປະສານງານໃນທຸກດ້ານ ເຊັ່ນ: ການອອກປີ້, ການປະສານງານຕາມສະຖານີຕ່າງໆ, ຫຼຸດຂັ້ນຕອນການແຈ້ງດ່ານ, ເປີດຊ່ອງທາງບູລິມະສິດແຫ່ງຊີວິດທີ່ປອດໄພ ແລະ ມີປະສິດທິພາບໃຫ້ຄົນເຈັບ.

ຕາມຕົວເລກຂໍ້ມູນສະຖິຕິຈາກສະຖານທູດຈີນປະຈຳລາວໃຫ້ຮູ້ວ່າ, ນັບແຕ່ເດືອນເມສາ ຫາ ເດືອນທັນວາ 2023, ມີຄົນເຈັບທີ່ມີອາການສາຫັດທັງໝົດ 18 ຄົນ ຖືກສົ່ງກັບຄືນສູ່ປະເທດຈີນ ໂດຍຜ່ານທາງລົດໄຟລາວ-ຈີນ ແລະ ໄດ້ຮັບການປິ່ນປົວຕໍ່ໄປ.

ແຫຼ່ງຂ່າວ: ສຳນັກຂ່າວຊິນຮວາ

# ການຮ່ວມມືຕາມລ້ອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ: ຮ່ວມກັນສ້າງອະນາຄົດທີ່ດີງາມກວ່າເກົ່າ

ວັນທີ 25 ທັນວາ 2023, ກອງປະຊຸມສຸດຍອດວ່າດ້ວຍການຮ່ວມມືປະເທດແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງຄັ້ງທີ 4 ໄດ້ຈັດຂຶ້ນໂດຍຜ່ານທາງວິດີໂອ, ຜູ້ນຳຈີນ ແລະ 5 ປະເທດລ້ອງແມ່ນ້ຳຂອງຄື: ກຳປູເຈຍ, ລາວ, ມຽນມາ, ໄທ, ແລະ ຫວຽດນາມ ໄດ້ເຂົ້າຮ່ວມກອງປະຊຸມໂດຍພາຍໃຕ້ຫົວຂໍ້ "ຊຸກຍູ້ການສ້າງປະຊາຄົມຮ່ວມຊາຕາກຳຂອງບັນດາປະເທດລ້ອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ຮ່ວມກັນມຸ່ງໜ້າໄປສູ່ຄວາມທັນສະໄໝ", ກອງປະຊຸມໄດ້ທວນຄືນຄວາມຄືບໜ້າແຫ່ງການຮ່ວມມືລ້ອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ແລະ ວາງແຜນການພັດທະນາໃນອະນາຄົດ.

ກອງປະຊຸມຄັ້ງນີ້ໄດ້ເຜີຍແຜ່ "ຖະແຫຼງການເນປີດໍຂອງກອງປະຊຸມສຸດຍອດວ່າດ້ວຍການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງຄັ້ງທີ4" "ແຜນແມ່ບົດແຫ່ງການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງຮອບ 5 ປີ (2023-2027)" ແລະ "ຂໍ້ລິເລີ່ມຮ່ວມ ໃນການສ້າງແລວທາງປະດິດສ້າງໃໝ່ລ້ອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ", ໃນນັ້ນ, "ແຜນແມ່ບົດແຫ່ງການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງຮອບ 5 ປີ (2023-2027)" ໄດ້ລະບຸວ່າ, ຈະເພີ່ມທະວີການຮ່ວມມືໃນ 3 ເສົາຄ້ຳ (ຄວາມໝັ້ນຄົງທາງການເມືອງ, ເສດຖະກິດ ແລະ ການພັດທະນາແບບຍືນຍົງ, ສັງຄົມ ແລະ ວັດທະນະທຳ), ລົງເລິກການຮ່ວມມືໃນ 5 ຂົງເຂດບູລິມະສິດ (ເຊື່ອມໂຍງເຊື່ອມຈອດກັນ, ຄວາມສາມາດດ້ານການຜະລິດ, ເສດຖະກິດຂ້າມຊາດ, ຊັບພະຍາກອນນ້ຳ, ກະສິກຳ ແລະ ການຫຼຸດຜ່ອນຄວາມທຸກຍາກ), ຕັ້ງໜ້າຂະຫຍາຍການຮ່ວມມືໃນຂົງເຂດໃໝ່, ຊຸກຍູ້ການຍົກລະດັບໜ່ວຍງານຮ່ວມກັນໃນບັນດາຂົງເຂດບູລິມະສິດໃຫ້ສູງຂຶ້ນ, ສະໜັບສະໜູນການສ້າງຕັ້ງໜ່ວຍງານປະສົມ ແລະ ສູນຮ່ວມມືໃໝ່.

ແຫຼ່ງຂ່າວ: CRI, App ເສດຖະກິດການຄ້າສຳນັກຂ່າວຊິນຮວາ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້–ອາຊີຕາເວັນອອກສ່ຽງໃຕ້ແຂວງຢູນນານ)

ynzhanba@163.com
laos.yunnangateway.com

# ທ້າຍປີ 2023, ອີງຕາມກອງປະຊຸມວຽກງານເສດຖະກິດຂອງຄ

ຂະນະພັກແຂວງຢູນນານທີ່ຈັດຂຶ້ນຢູ່ນະຄອນຄຸນໝິງໃຫ້ຮູ້ວ່າ, ປີ 2023,ການພັດທະນາເສດຖະກິດຂອງແຂວງຢູນນານໄດ້ຮັກສາທ່ວງທ່າຂະຫຍາຍຕົວຢ່າງໝັ້ນທ່ຽງແລະ ໄປສູ່ທິດທາງທີ່ດີ, ຄາດວ່າGDP ຈະບັນລຸເຖິງ 3000 ຕື້ຢວນ.

ປີ 2023 ແມ່ນປີທຳອິດທີ່ແຂວງຢູນນານປະຕິບັດຍຸດທະສາດການພັດທະນາ"3815" (ກ້າວຂຶ້ນສູ່ລະດັບໃໝ່ແຕ່ປີ 2023– 2025, ມີການພັດທະນາໃຫຍ່ໃນ 8 ປີ ຄືແຕ່ປີ 2023 – 2030 ແລະ ການພັດທະນາແບບກ້າວກະໂດດຂັ້ນ ແຕ່ປີ 2021 – 2035). ການພັດທະນາເສດຖະກິດຂອງທົ່ວແຂວງໄດ້ຮັກສາທ່ວງທ່າຂະຫຍາຍຕົວຢ່າງໝັ້ນທ່ຽງ ແລະ ໄປສູ່ທິດທາງທີ່ດີ, ໄດ້ຍ່ວງບາດກ້າວທຳອິດຢ່າງໜັກແໜ້ນ ກໍຄື "ກ້າວຂຶ້ນສູ່ລະດັບ ໃໝ່ ໃນໄລຍະ 3 ປີ" ຂອງຍຸດທະສາດການພັດທະນາ "3815" .

ນອກຈາກລວມຍອດເສດຖະກິດມີການບຸກທະລຸໃໝ່ແລ້ວ, ໃນປີ 2023, ແຂວງຢູນນານຍັງໄດ້ມີການບຸກທະລຸໃໝ່ໃນຫຼາຍດ້ານ ເຊັ່ນການປັບປຸງໂຄງປະກອບດ້ານການລົງທຶນໃຫ້ດີຂຶ້ນ, ການພັດທະນາກຸ່ມອຸດສາຫະກຳ, ການດຶງດູດ ແລະ ການອົບຮົມບົ່ມສ້າງບັນດາຫົວໜ່ວຍທຸລະກິດ, ການຫັນປ່ຽນຮູບການພັດທະນາຂອງຂະແໜງການທ່ອງທ່ຽວ, ການເປີດກວ້າງການເປີດປະຕູສູ່ພາຍນອກ, ການພັດທະນາແບບສີຂຽວ, ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

ແຫຼ່ງຂ່າວ: ເວັບໄຊຂ່າວສານຈີນ




ນັບແຕ່ເດືອນມັງກອນ ຫາ ເດືອນພະຈິກ 2023, ການລົງທຶນດ້ານອຸດສາຫະກຳຂອງແຂວງຢູນນານໄດ້ເພີ່ມຂຶ້ນ 11,4%, ຂະໜາດການລົງທຶນດ້ານກະສິກຳໄດ້ສືບຕໍ່ຮັກສາອັນດັບ1 ໃນທົ່ວປະເທດຈີນ, ອັດຕາການເຕີບໂຕດ້ານການລົງທຶນອຸດສາຫະກຳໄດ້ຫຼາຍກວ່າ 20% ເປັນເວລາ 22 ເດືອນລຽນຕິດ;

ນັບແຕ່ເດືອນມັງກອນ ຫາ ເດືອນພະຈິກ 2023, ໃນເຂດພັດທະນາ 89 ແຫ່ງຂອງແຂວງຢູນນານ, ມູນຄ່າເພີ່ມຂອງອຸດສາຫະກຳຂະໜາດໃຫຍ່ ໄດ້ເພີ່ມຂຶ້ນ 8,3% ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ, ມູນຄ່າເພີ່ມຂອງອຸດສາຫະກຳຂະໜາດໃຫຍ່ຢູ່ເຂດໃໝ່ພາກກາງແຂວງຢູນນານ ໄດ້ເພີ່ມຂຶ້ນ 17,9%ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ;



ນັບແຕ່ເດືອນມັງກອນ ຫາ ເດືອນພະຈິກ 2023, ແຂວງຢູນນານມີອົງກອນທຸລະກິດ 6,2 ລ້ານແຫ່ງ, ເພີ່ມຂຶ້ນ 28,2%, ເພີ່ມຂຶ້ນສຸດທິ 1,29 ລ້ານຫົວໜ່ວຍ ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ, ໃນນັ້ນມີວິສາຫະກິດ 1,37 ລ້ານແຫ່ງ, ເພີ່ມຂຶ້ນສຸດທິ 338.000 ແຫ່ງ ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ;

ນັບແຕ່ເດືອນມັງກອນຫາເດືອນພະຈິກ 2023, ແຂວງຢູນນານໄດ້ຕ້ອນຮັບນັກທ່ອງທ່ຽວ 980 ລ້ານເທື່ອຄົນ, ໄດ້ສ້າງລາຍຮັບດ້ານການທ່ອງທ່ຽວທັງໝົດ 1.290 ຕື້ຢວນ;

ໃນປີ 2023, ສະໜາມບິນສາກົນອັງກໍວັດກຳປູເຈຍທີ່ຮັບເໝົາກໍ່ສ້າງໂດຍວິສາຫະກິດແຂວງຢູນນານຈີນ ເລີ່ມເປີດບໍລິການ. ມາຮອດວັນທີ 27 ທັນວາ 2023, ທາງລົດໄຟລາວ-ຈີນໄດ້ຂົນສົ່ງຜູ້ໂດຍສານຂ້າມຊາດ 112.000 ເທື່ອຄົນຈາກ 75 ປະເທດແລະເຂດແຄວ້ນ;

ປັດຈຸບັນນີ້, ອັດຕາສ່ວນພະລັງງານໄຟຟ້າສີຂຽວຂອງແຂວງຢູນນານໄດ້ກວມເອົາເກືອບ 90%, ອັດຕາສ່ວນພະລັງງານທີ່ບໍ່ແມ່ນປະເພດຟອດຊິວໄດ້ບັນລຸເຖິງ 47,3%;

ໃນ 3 ໄຕມາດທຳອິດຂອງປີ 2023, ລາຍຮັບທີ່ຈັບຕ້ອງໄດ້ຂອງປະຊາຊົນແຂວງຢູນນານມີເຖິງ 20,367 ຢວນຕໍ່ຫົວຄົນ.

ແຫຼ່ງຂ່າວ: ເວັບໄຊຂ່າວສານຈີນ, ໜັງສືພິມລາຍວັນຢູນນານ, ຂ່າວສານ CCTV, ເວັບໄຊ CMG

